Card #________________________ Program Year **2025**
*(For official use only)*

# ໃບຄຳຮ້ອງຂໍ & ໃບຢັ້ງຢືນສຳລັບໂຄງການ WA Senior Farmers Market Nutrition Program

***ຊື່:** ________________ ________________ ***ວັນເກີດ (ເດືອນ/ວັນ/ປີ) :** ____/____/______
(ຊື່) (ນາມສະກຸນ) (ເດືອນ) (ວັນ) (ປີ)

**ທີ່ຢູ່:** ________________________________________ **ຫ້ອງແຖວ #:** ______________

***ເມືອງ:** ________________________ ***ຊິບໂຄດ:** ___________ **ຄາວຕີ:** ______________

**ໂທຣະສັບ:** ________________________

ໂຄງການອາຫານການກິນຂອງຕະຫລາດສວນຜັກສຳລັບຜູ້ອາວຸໂສ (Senior Farmers Market Nutrition Program, SFMNP) ຈະເອົາຫມາກໄມ້ແລະຜັກສົດໃຫ້ຜູ້ອາວຸໂສຜູ້ທີ່ມີຣາຍໄດ້ຕ່ຳດ້ວຍເປົ້າຫມາຍຂອງການສົ່ງເສີມສຸຂະພາບແລະສະພາບອາຫານການກິນຂອງເຂົາເຈົ້າໃຫ້ດີຂຶ້ນກວ່າເກົ່າ.ມັນຍັງຈະຊ່ວຍຊູການປູກຝັງທ້ອງຖິ່ນອີກຄືກັນໂດຍການເພີ້ມການໃຊ້ຕະລາດຊາວຟາມແລະຮ້ານຂາຍຕາມຂ້າງຖະນົນຫລາຍຂຶ້ນ.

ເພື່ອຈະມີເງື່ອນໄຂໄດ້ຮັບ SFMNP, ທ່ານຕ້ອງສອດຄ່ອງນຳທຸກໆຢ່າງຂອງສິ່ງຕໍ່ລົງໄປນີ້:

1. **ທ່ານຕ້ອງມີອາຍຸ 60 ປີຫລືແກ່ກວ່າ (55+ ຖ້າຫາກວ່າທ່ານເປັນຄົນອະເມຣິກາດັ້ງເດີມ/ອາລາສກາດັ້ງເດີມ)**

2. **ຣາຍໄດ້ຂອງທ່ານຕ້ອງຕ່ຳກວ່າ 185% ຂອງລະດັບຄວາມທຸກຍາກຂອງຣັດຖະບານກາງ.ມັນຫມາຍຄວາມວ່າ:**
   - **$28,953 ຕໍ່ປີຫລື $2,413 ຣາຍໄດ້ຕໍ່ເດືອນສຳລັບ 1 ຄົນ**
   - **$39,128 ຕໍ່ປີຫລື $3,261 ຣາຍໄດ້ຕໍ່ເດືອນສຳລັບ 2 ຄົນ**
   - **ສຳລັບຄອບຄົວໃຫຍ່, ຕື່ມໃສ່ $848 ສຳລັບແຕ່ລະຄົນເພີ້ມເຕີມ**

3. **ທ່ານຕ້ອງເປັນຄົນອາສັຍຢູ່ຂອງຣັດວໍຊິງຕັນ**

ໂດຍການເຊັນຊື່ໃສ່ຟອມໃບນີ້,ທ່ານຢັ້ງຢືນວ່າທ່ານສອດຄ່ອງນຳ ທຸກໆ ກົດກຳນົດເງື່ອນໄຂຮັບເອົາຢູ່ຂ້າງເທິງນີ້ແລະຮັບຮູ້ວ່າທ່ານໄດ້ຖືກເອົາໃຫ້ແລ້ວຣາຍຣະອຽດກ່ຽວກັບສິດທິແລະຄວາມຮັບຜິດຊອບຂອງ SFMNP.

*______________________________________ *____________________
**ລາຍເຊັນຂອງຜູ້ເຂົ້າຮ່ວມ** **ວັນທີ**

---

ກະຣຸນາຕອບຄຳຖາມຢູ່ຂ້າງລຸ່ມນີ້ —ຄຳຕອບຂອງທ່ານແມ່ນຕາມສະມັກໃຈ:

1. ທ່ານຖືຕົວທ່ານເອງວ່າເປັນຄົນຮິສແປນິກ/ຄົນລາຕິໂນບໍ່? ☐ ແມ່ນ ☐ ບໍ່ແມ່ນ

2. *ກະຣຸນາຫມາຍໃສ່ທຸກໆຢ່າງທີ່ກ່ຽວນຳ:
   ☐ ຄົນອະເມຣິກາດັ້ງເດີມຫລືຄົນອາລາສກາດັ້ງເດີມ
   ☐ ຄົນເອເຊັຍ
   ☐ ຄົນແອຟຣິກແກນອະເມຣິກັນ
   ☐ ຄົນຜິວຂາວ
   ☐ ຄົນຮາວາຍດັ້ງເດີມຫລືຄົນເກາະແປຊີຟິກອື່ນໆ

ໂດຍອີງຕາມກົດຫມາຍຂອງຣັດຖະບານກາງແລະນະໂຍບາຍຂອງກົມ U.S. Department of Agriculture, ສະຖາບັນແຫ່ງນີ້ໄດ້ຖືກຫວງຫ້າມຈາກການແບ່ງແຍກຊົນຊັ້ນວັນນະໂດຍອີງໃສ່ພື້ນຖານຂອງຜິວພັນ,ສີສັນ,ເຊື້ອຊາດດັ້ງເດີມ,ເພດ,ອາຍຸຫລືຄວາມເສັຽອົງຄະຫລືການຕອບໂຕ້ຫລືການແກ້ແຄ້ນຍ້ອນກິຈກັມການເຄື່ອນໄຫວທາງສິດທິພົລເມືອງໃນຜ່ານມາຢູ່ໃນໂຄງການຫລືກິຈກັມແນວໃດແນວນຶ່ງທີ່ຖືກດຳເນີນການຫລືອອກເງິນທຶນໃຫ້ໂດຍ USDA. ກະຣຸນາເບິ່ງອີກດ້ານນຶ່ງຂອງໃບປັ້ງປີນເພື່ອຣາຍຣະອຽດເພີ້ມເຕີມ.

*ການບໍ່ແບ່ງແຍກຊົນຊັ້ນວັນນະ*

**ອິດສາຣະພາບຈາກການບໍ່ແບ່ງແຍກຊົນຊັ້ນວັນນະ**

ສະຖາບັນແຫ່ງນີ້ໄດ້ຖືກຫວງຫ້າມຈາກການແບ່ງແຍກຊົນຊັ້ນວັນນະໂດຍອີງໃສ່ພື້ນຖານຂອງເພດ,ຜິວພັນ,ລັດທິ,ສາສະນາ,ສີສັນ,ເຊື້ອຊາດດັ້ງເດີມ,ອາຍຸ,ນັກຮົບເກົ່າຫລືສະພາບທະຫານ,ຄວາມອຸ່ນອ່ຽງທາງເພດ,ຄວາມເສັຽອົງຄະ,ຫລືການໃຊ້ຫມານຳທາງຫລືສັດບໍຣິການທີ່ຖືກຝຶກຝົນມາ (ສັດບໍຣິການແມ່ນສັດທີ່ຖືກຝຶກຝົນມາໂດຍສະເພາະເພື່ອຈະເຮັດວຽກຫລືປະຕິບັດພາລະກິດເພື່ອຜົນປະໂຍດຂອງບຸກຄົນຜູ້ທີ່ມີຄວາມເສັຽອົງຄະ) . (RCW 49.60.030)

**USDA ການແຈ້ງການຂອງການບໍ່ແບ່ງແຍກຊົນຊັ້ນວັນນະ**

ໂດຍການສອດຄ່ອງນຳກົດຫມາຍສິດທິພົລເມືອງຂອງຣັດຖະບານກາງແລະກົດຣະບຽບແລະນະໂຍບາຍກ່ຽວກັບສິດທິພົລເມືອງຂອງກົມ U.S. Department of Agriculture (USDA), ສະຖາບັນແຫ່ງນີ້ຖືກຫວງຫ້າມບໍ່ໃຫ້ມີການແບ່ງແຍກຊົນຊັ້ນວັນນະໂດຍອີງຕາມພື້ນຖານຂອງຜິວພັນ,ສີສັນ,ເຊື້ອຊາດດັ້ງເດີມ,ເພດ (ລວມທັງເອກະລັກທາງເພດແລະການອຸ່ນອ່ຽງທາງເພດ) ,ຄວາມເສັຽອົງຄະ,ອາຍຸ,ຫລືການຕອບໂຕ້ຫລືການແກ້ແຄ້ນຍ້ອນກິຈກັມການເຄື່ອນໄຫວທາງສິດທິພົລເມືອງໃນຜ່ານມາ.

ຣາຍຣະອຽດຂອງໂຄງການຈະຖືກເຮັດມີໄວ້ໃຫ້ໃນພາສາອື່ນໆນອກຈາກພາສາອັງກິດ. ບຸກຄົນທີ່ມີຄວາມເສັຽອົງຄະຜູ້ທີ່ຕ້ອງການແບບທາງອື່ນຂອງການຕິດຕໍ່ສື່ສານເພື່ອຈະຂໍອກເອົາຣາຍຣະອຽດຂອງໂຄງການ (ເຊັ່ນວ່າ,ຫນັງສືສຳລັບຄົນຕາບອດ,ຕົວພິມໃຫຍ່,ເທັບອັດສຽງ,ພາສາອະເມຣິກັນໃບ້,ອື່ນໆ) ,ຄວນຈະຕິດຕໍ່ຫາຫ້ອງການຣັດຫລືທ້ອງຖິ່ນບ່ອນທີ່ບໍຣິຫານໂຄງການຫລື USDA's TARGET Center ໄດ້ທີ່ເລກ (202) 720-2600 (ສຽງເວົ້າແລະ TTY) ຫລືຕິດຕໍ່ຫາ USDA ໂດຍຜ່ານ Federal Relay Service ໄດ້ທີ່ເລກ (800) 877-8339.

ເພື່ອຈະຍື່ນຄຳຮ້ອງທຸກຂອງການແບ່ງແຍກຊົນຊັ້ນວັນນະກ່ຽວກັບໂຄງການ,ຜູ້ຮ້ອງທຸກຕ້ອງຂຽນປະກອບໃບຟອມ Form AD-3027, USDA Program Discrimination Complaint Form ຖືກພົບເຫັນທາງອອນລາຍນ໌ຢູ່ທີ່: https://www.usda.gov/sites/default/files/documents/ad-3027.pdf, ຈາກຫ້ອງການ USDA, ທຸກໆບ່ອນ,ຫລືໂດຍການໂທຫາ (866) 632-9992, ຫລືໂດຍການຂຽນຫນັງສືຈ່າຫນ້າຂອງເຖິງ USDA. ຫນັງສືຕ້ອງມີຊື່ຂອງຜູ້ຮ້ອງທຸກ,ທີ່ຢູ່,ເລກໂທຣະສັບ,ແລະການບັນຣະຍາຍເຖິງການກະທຳແບບແບ່ງແຍກຊົນຊັ້ນວັນນະທີ່ຖືກກ່າວຫາເປັນຣາຍຣະອຽດພຽງພໍເພື່ອຈະແຈ້ງບອກ Assistant Secretary for Civil Rights (ASCR) ກ່ຽວກັບສະພາບແລະວັນທີຂອງການລ່ວງລະເມີດສິດທິພົລເມືອງທີ່ຖືກກ່າວຫາ.ໃບຟອມ AD-3027 ທີ່ຖືກຂຽນປະກອບແລ້ວຫລືຫນັງສືຕ້ອງຖືກຍື່ນໄປຫາ USDA ໂດຍ:

1. **ໄປສະນີ:**
   U.S. Department of Agriculture
   Office of the Assistant Secretary for Civil Rights
   1400 Independence Avenue, SW
   Washington, D.C. 20250-9410; ຫລື
2. **ແຟກຊ໌:**
   (833) 256-1665 ຫລື (202) 690-7442; ຫລື
3. **ອີແມລ໌:**
   Program.Intake@usda.gov

ສະຖາບັນແຫ່ງນີ້ເປັນຜູ້ບໍຣິການທີ່ໃຫ້ໂອກາດເທົ່າທຽມກັນ.